**ມິຊຊາອາທິດໃບລານ**

**ວັນທີ 10 ເມສາ 2022**



**ພຣະວໍລະສານໂດຍນັກບຸນລູກາ 19, 28-40**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດນຳໜ້າຂຶ້ນໄປນະຄອນເຢລູຊາແລມ. ພໍຈະເຖິງບ້ານເບັດຟາເຢແລະເບທານີໃກ້ພູທີ່ຊື່ວ່າພູໝາກກອກ. ພຣະອົງແຕ່ງສາວົກສອງຄົນໄປກ່ອນແລະສັ່ງວ່າ: ຈົ່ງໄປບ້ານທີ່ຢູ່ໜ້າພຸ້ນ, ເມື່ອໄປເຖິງແລ້ວພວກເຈົ້າຈະເຫັນລູກລາຕົວໜຶ່ງລ່າມຢູ່, ຍັງບໍ່ທັນມີໃຜຂຶ້ນຂີ່ເລີຍ ຈົ່ງແກ້ເອົາແລະຈູງມາໃຫ້ເຮົາ. ຖ້າມີໃຜຖາມວ່າ: ເປັນຫຍັງຈຶ່ງແກ້ມັນ ກໍໃຫ້ຕອບວ່າພຣະອົງເຈົ້າຕ້ອງການ.

ສາວົກທັງສອງໄດ້ໄປແລະພົບເຫັນທຸກຢ່າງຕາມທີ່ພຣະອົງໄດ້ບອກໄວ້. ເມື່ອພວກເຂົາແກ້ເຊືອກລາອອກ, ເຈົ້າຂອງກໍຮ້ອງຖາມວ່າ: ພວກເຈົ້າແກ້ເອົາລູກລານີ້ໄປເຮັດຫຍັງ? ພວກສາວົກຕອບວ່າ: ພຣະອົງເຈົ້າຕ້ອງການ. ແລ້ວກໍຈູງລາມາຫາພຣະເຢຊູເຈົ້າ. ພວກເຂົາເອົາເສື້ອຕຸ້ມປູຫລັງລາ ແລ້ວເຊີນພຣະອົງຂຶ້ນປະທັບນັ່ງ. ໃນເວລາພຣະອົງສະເດັດໄປນັ້ນປະຊາຊົນກໍພາກັນແກ້ເສື້ອຕຸ້ມຂອງຕົນອອກມາປູລາດໄປຕາມທາງ.

ເມື່ອຈະລົງຈາກພູໝາກກອກ, ບັນດາພວກລູກສິດມີຄວາມຊື່ນຊົມຍິນດີໂຮຮ້ອງສັນລະເສີນພຣະເປັນເຈົ້າ ຍ້ອນອັດສະຈັນຕ່າງໆທີ່ໄດ້ເຫັນ. ພວກເຂົາເວົ້າວ່າ : ຂໍພຣະມະຫາກະສັດຜູ້ສະເດັດມາໃນນາມຂອງພຣະອົງເຈົ້າຈົ່ງຊົງພຣະຈະເລີນ! ສັນຕິສຸກຈົ່ງມີໃນສະຫວັນແລະພຣະກຽດມຸງຄຸນໃນທີ່ສູງສຸດ.

ພວກຟາຣີເຊວລາງຄົນທີ່ຢູ່ໃນຝູງຊົນທູນພຣະອົງວ່າ: ພຣະອາຈານ, ໂຜດສັ່ງໃຫ້ພວກສາວົກຂອງທ່ານມິດແດ່. ພຣະເຢຊູເຈົ້າກ່າວຕອບວ່າ: ເຮົາຂໍບອກພວກເຈົ້າວ່າ ຖ້າຄົນເຫລົ່ານີ້ມິດແລ້ວ, ກ້ອນຫີນຈະຮ້ອງຂຶ້ນແທນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດໃບລານເປັນວັນຊຶ່ງພວກເຮົາກ້າວເຂົ້າສູ່ອາທິດສັກສິດ ຫລືເອີ້ນອີກຊື່ໜຶ່ງວ່າ "ອາທິດມະຫາທໍລະມານຂອງພຣະເຢຊູເຈົ້າ". ເພາະຈຸດສຸດຍອດຂອງອາທິດສັກສິດແມ່ນສາມມື້ກ່ອນປາສກາຊຶ່ງພວກເຮົາຮຽກວ່າ "ຕຣີວານປາສກາ" ຄື: ວັນພຣະຫັດສັກສິດ, ວັນສຸກສັກສິດ ແລະວັນເສົາສັກສິດ. ດ້ວຍເຫດນີ້, ວາຈາພຣະເຈົ້າໃນວັນອາທິດໃບລານນີ້ຈຶ່ງປຽບເໝືອນແສງສະວ່າງເຍືອງທາງໃຫ້ພວກເຮົາເຫັນເຖິງເສັ້ນທາງຊຶ່ງນໍາພຣະເຢຊູເຈົ້າໄປສູ່ມະຫາທໍລະມານແລະການຕາຍຂອງພຣະອົງຢູ່ນະຄອນເຢລູຊາແລມ. ແລະກໍແມ່ນຢູ່ນະຄອນເຢລູຊາແລມນີ້ເອງຊຶ່ງພຣະເຢຊູເຈົ້າຈະຊະນະຄວາມຕາຍດ້ວຍການກັບເປັນຄືນມາ. ແຕ່ກ່ອນທີ່ຈະເຖິງວັນແຫ່ງໄຊຊະນະນີ້, ພຣະເຢຊູເຈົ້າຈໍາຕ້ອງຖືກທໍລະຍົດຈາກລູກສິດຜູ້ໜຶ່ງຂອງພຣະອົງຄືຢູດາ. ພຣະອົງຈໍາຕ້ອງຖືກປະຖິ້ມຈາກຜູ້ທີ່ຢູ່ໃກ້ຊິດພຣະອົງຄືບັນດາພວກລູກສິດ. ພຣະອົງຈໍາຕ້ອງຖືກກ່າວຫາແລະຖືກຕັດສິນຢ່າງບໍ່ຍຸດຕິທໍາຈາກພວກເຖົ້າແກ່ມະຫາສົງ. ພຣະອົງຈໍາຕ້ອງຖືກຂ້ຽນຕີ, ທໍລະມານດັ່ງຄົນໂທດ. ແລະທ້າຍສຸດ, ພຣະອົງຈໍາຕ້ອງຕາຍບົນໄມ້ກາງເຂນທ່າມກາງໂຈນຜູ້ຮ້າຍ. ແຕ່ສິ່ງເຫລົ່ານີ້ຈໍາຕ້ອງເປັນມາເພື່ອໃຫ້ຖືກຕ້ອງຕາມວາຈາທີ່ພຣະອົງໄດ້ຊົງປະກາດໄວ້. ແລະກໍເພື່ອໃຫ້ຖືກຕ້ອງຕາມແຜນການແລະນໍ້າພຣະໄທຂອງພຣະບິດາເຈົ້າ. ເພາະນໍ້າພຣະໄທຂອງພຣະບິດາຄືໃຫ້ທຸກຄົນເຊື່ອໃນພຣະເຢຊູ, ພຣະບຸດຂອງພຣະອົງແລະໄດ້ຮອດຊີວິດ.

ຄໍາໂຮຮ້ອງຊຶ່ງຝູງຊົນໄດ້ແຫ່ແຫນພຣະອົງເຂົ້າເຢລູຊາແລມດັ່ງກະສັດຂອງພວກເຂົາ, ກໍຈະປ່ຽນເປັນຄໍາສາບແຊ່ງເມື່ອພຣະອົງຖືກຕັດສິນ. ຝູງຊົນແລະພວກລູກສິດທີ່ຫ້ອມລ້ອມພຣະເຢຊູເຈົ້າເມື່ອພຣະອົງສະເດັດຂຶ້ນນະຄອນເຢລູຊາແລມວັນນີ້, ກໍຈະພ້ອມກັນປະຖິ້ມພຣະອົງເມື່ອພຣະອົງຖືກຈັບ. ສິ່ງເຫລົ່ານີ້ສະທ້ອນໃຫ້ເຫັນເຖິງຄວາມອ່ອນແອແລະສະພາບຄົນບາບຂອງພວກເຮົາ. ຄວາມບໍ່ສັດຊື່ຂອງພວກເຮົາຕໍ່ຄວາມຮັກແລະວາຈາຂອງພຣະອົງ. ແຕ່ກໍຍ້ອນສະພາບອ່ອນແອແລະຄົນບາບຂອງພວກເຮົານີ້ແລ, ພຣະອົງຈຶ່ງມາໃນໂລກແລະຍອມຕາຍເພື່ອໄຖ່ກູ້ພວກເຮົາອອກຈາກບາບ, ເພື່ອທໍາໃຫ້ພວກເຮົາມີເສລີພາບໃນການກັບມາຄືນດີແລະເປັນລູກຂອງພຣະບິດາເຈົ້າອີກຄັ້ງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນທີ່ພຣະອົງສະເດັດຂຶ້ນນະຄອນເຢລູຊາແລມເພື່ອຮັບທໍລະມານແລະຕາຍເພື່ອລູກນີ້. ໂຜດຊ່ວຍລູກໃຫ້ຮູ້ຈັກເປັນທຸກເຖິງບາບແລະຜັນປ່ຽນຊີວິດ, ເພື່ອລູກຈະໄດ້ຮັບໝາກຜົນແຫ່ງການໄຖ່ກູ້ຂອງພຣະອົງຜ່ານທາງການຕາຍແລະການກັບເປັນຄືນມາຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ